ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===== 000 =====

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 1077 /ກປຝ.

ນະຄອນຫຼວງວຽງຈັນ, ວັນທີ 30 SEP 2010

# ບົດແນະນຳ

## ຂອງ ຫົວໜ້າກົມປູກຝັງ

## ກ່ຽວກັບ ຫລັກການ ແລະ ວິທີການໃນການອອກໃບຢັ້ງຢືນສຸຂານາໄມພືດ

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ /ຂອງ ສປປ ລາວ.
- ອີງຕາມສົນທິສັນຍາປ້ອງກັນພືດສາກົນ ສະບັບປັບປຸງ 1997.
- ອີງຕາມມາດຕະການສຸຂານາໄມພືດ ສາກົນສະບັບ ເລກທີ 12 ແລະ ເລກທີ 7 ວ່າດ້ວຍລະບົບການ ຢັ້ງຢືນສຸຂານາໄມພືດ.

ການອອກໃບຢັ້ງຢືນສຸຂານາໄມພືດ ແມ່ນ ການຢັ້ງຢືນ ສິນຄ້າພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນໆ ໂດຍປະຕິບັດຕາມມາດຕະການສຸຂານາໄມພືດ ສາກົນສະບັບ ເລກທີ 12 ( ISPM No.12) ທີ່ໄດ້ກຳນົດໄວ້.

ຫົວໜ້າກົມປູກຝັງຈຶ່ງອອກບົດແນະນຳດັ່ງນີ້:

1. **ລະບົບການອອກໃບຢັ້ງຢືນສຸຂານາໄມພືດ.**

1.1. **ແບບຟອມໃບຢັ້ງຢືນສຸຂານາໄມພືດທີ່ນຳໃຊ້.**

ບັນດາແຂວງທີ່ໄດ້ຮັບອະນຸຍາດໃນການອອກໃບຢັ້ງຢືນສຸຂານາໄມພືດ ( Phytosanitary Certificate ) ຕ້ອງປະຕິບັດຢ່າງເປັນເອກກະພາບ ໂດຍການນຳໃຊ້ເຄື່ອງມື ແລະ ແບບຟອມວິຊາການທີ່ກົມປູກຝັງໄດ້ກຳນົດອອກ ເພື່ອໃຫ້ສອດຄ່ອງໃນການພົວພັນຕາມຫລັກການສາກົນ ພາຍໃຕ້ສົນທິສັນຍາປ້ອງກັນພືດສາກົນ (IPPC) ທີ່ໄດ້ກຳນົດໄວ້.ປະຈຸບັນ,ສປປລາວ ໄດ້ນຳໃຊ້ແບບຟອມໃບຢັ້ງຢືນສຸຂານາໄມພືດ ທີ່ກຳນົດໄວ້ໃນ ISPM No.12 ຂອງສົນທິສັນຍາປ້ອງກັນພືດສາກົນ(IPPC),ລາຍລະອຽດມີເອກະສານຄັດຕິດຊ້ອນທ້າຍ.

1.2. **ວິທີການອອກໃບຢັ້ງຢືນສຸຂານາໄມພືດ.**

ການອອກໃບຢັ້ງຢືນສຸຂານາໄມພືດ ຂອງ ສປປ ລາວ ແມ່ນນຳໃຊ້ ໂປແກມ National Phytosanitary Database (NPD) ເຊິ່ງແມ່ນກົມປູກຝັງເປັນຜູ້ຄຸ້ມຄອງແລະຕິດຕັ້ງໃຫ້ແກ່ໜ່ວຍງານຮັບຜິດຊອບການອອກໃບຢັ້ງຢືນສຸຂານາໄມພືດທີ່ໄດ້ຮັບອະນຸຍາດເທົ່ານັ້ນ.ຈາກກະຊວງກະສິກຳ ແລະ ປ່າໄມ້.

1.3. **ເອກະສານສຳລັບການຂໍໃບຢັ້ງຢືນສຸຂານາໄມພືດ.**

ເອກະສານສຳລັບການຂໍໃບຢັ້ງຢືນ ສຸຂານາໄມພືດ ປະກອບມີ ດັ່ງລຸ່ມນີ້:

- ໃບສະເໜີຈາກຜູ້ສົ່ງອອກ (Application form)

- ໃບອະນຸຍາດນຳເຂົ້າ (ຫາກໄດ້ຖືກກຳນົດຂຶ້ນ)ຈາກປະເທດປາຍທາງ,(Import Permit issued by National Plant Protection Organization of import country)
- ໃບກຳກັບລາຍການ/ແຈ້ງລາຄາສິນຄ້າ (ຈາກບໍລິສັດ),(Packing List / Invoice)
- ໃບຢັ້ງຢືນແຫຼ່ງປູກ, (Place of Origin)
- ໃບຢັ້ງຢືນການກວດກາພືດ, (Inspection Report)
- ໃບຢັ້ງຢືນການຮົມຢາ (ໃນກໍລະນີປະເທດປາຍທາງຫາກຕ້ອງການ) (Fumigation Certificate)

ໝາຍເຫດ:

- ການອອກໃບຢັ້ງຢືນສຸຂານາໄມພືດທີ່ບໍ່ຖືກຕ້ອງຕາມກົດໝາຍແມ່ນອອກໂດຍໜ່ວຍງານ ໃດໜຶ່ງທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງ ກະສິກຳ ແລະ ປ່າໄມ້.
- ຂໍ້ມູນປະກອບໃສ່ໃນແບບຟອມໃນໃບຢັ້ງຢືນ ສຸຂານາໄມພືດ ບໍ່ຖືກຕ້ອງຕາມຄວາມເປັນຈິງ.
- ໃນກໍລະນີຫາກມີການແຈ້ງຂໍ້ມູນເພີ່ມເຕີມໃຫ້ໜ່ວຍງານຮັບຜິດຊອບອອກໃບຢັ້ງຢືນສຸຂານາໄມພືດຈະຕ້ອງແຈ້ງໃຫ້ກົມປູກຝັງຮັບຊາບ.

ດັ່ງນັ້ນ, ກົມປູກຝັງຈຶ່ງເຮັດບົດແນະນຳ ມາຍັງທ່ານເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້ ກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

ບ່ອນນຳສົ່ງ:

| | |
|---|---|
| - ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ | 1 ສະບັບ (ເພື່ອໃຊ້ລາຍງານ) |
| - ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ | 1 ສະບັບ |
| - ພະແນກນິຕິກຳ ກະຊວງ ກປ. | 1 ສະບັບ |
| - ພະແນກ ກປ ແຂວງ | 1 ສະບັບ (ເພື່ອຊ່ວຍຊີ້ນຳການຈັດຕັ້ງປະຕິບັດ) |
| - ເກັບມ້ຽນ | 1 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===== 000 =====

ກະຊວງກະສິກຳ ແລະ ປ່າໄມ້

.....................

ເລກທີ ....... /.

ທີ່ ........., ວັນທີ .......

# ໃບຄຳຮ້ອງ

## ຂໍໃບຢັ້ງຢືນ ສຸຂານາໄມພືດ

- ອີງຕາມ ກົດໝາຍວ່າດ້ວຍການ ປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09/12/2010

ຮຽນ: ທ່ານ .......................................................

1. ໃບມອບສິດ ເລກທີ .............. ຂ້າພະເຈົ້າ, ຫລື ຕົວແທນຜູ້ສົ່ງອອກ ..............

Authority No Name of Applicant or authorized representative of exporter

ທີ່ຢູ່ Address ..............................................................

ແຂວງ .......... ລະຫັດໄປສະນີ .......... ໂທລະສັບ .......... ແຟກ ..........

Province Post code Telephone Facsimile

2. ຊື່ ແລະ ທີ່ຢູ່ຜູ້ສົ່ງອອກ ..............................................

Name and Address of Exporter ..............................................

ຊື່ ແລະ ທີ່ຢູ່ຜູ້ຮັບສິນຄ້າ ..............................................

Name and Address of consignee ..............................................

ແຫລ່ງປູກ .......... ເຄື່ອງໝາຍເທິງພາຊະນະບັນຈຸ ..........

Place of Origin Distinguishing marks

ຂົນສົ່ງໂດຍ ☐ ທາງບົກ ☐ ທາງອາກາດ ☐ ທາງນ້ຳ ວັນທີ່ສົ່ງອອກ ..........

Mean of conveyance Road Air Sea Date of exportation

ປະເທດປາຍທາງ .......... ໃບອະນຸຍາດນຳເຂົ້າເລກທີ .......... ມູນຄ່າ ..........

City and country of destination Import Permit No. Value

3. ຂໍຍື່ນຄຳຮ້ອງໃບສຸຂານາໄມພືດສຳຫລັບພືດດັ່ງຕໍ່ໄປນີ້

Wish to apply for Phytosanitary Certificate of plants as follows:

ຊື່ ທາງພືດສາດ .......... ນ້ຳໜັກລວມທັງໝົດ ..........

Botanical name of Plants Total number of packages

Name of produce and quantity declared

| ລຳດັບ<br>No. | ຊື່ພືດ<br>Name of Plants | ປະລິມານ<br>Quantity | ຫົວໜ່ວຍ<br>Counting uni | ລາຄາຕໍ່ໜ່ວຍ<br>Unit price | ມູນຄ່າ<br>Value | ຈຳນວນພາຊະນະບັນຈຸ<br>Number of packages |
|---|---|---|---|---|---|---|
| | | | | | | |

4. ໃບຄຳຮ້ອງ,ຂ້າພະເຈົ້າໄດ້ ປະກອບເອກະສານ ຕ່າງໆມາພ້ອມຂ້າງລຸ່ມນີ້:

Here I have enclosed documentary evidence as follows:

☐ ໃບອະນຸຍາດນຳເຂົ້າຈາກປະເທດປລາຍທາງ (ໃນກໍລະນີກຳນົດໂດຍປະເທດປລາຍທາງ)

A true copy of import permit issued by National Plant Protection Organization of import country

☐ ໃບແຈ້ງລາຍການສິນຄ້າ ແລະ ແຈ້ງລາຄາສິນຄ້າ

A true copy of invoice/packing list

☐ ບົດລາຍງານການກວດກາພືດ

A true copy of inspection report

☐ ໃບຢັ້ງຢືນແຫລ່ງປູກພືດ

A true copy of place of origin

☐ ໃບຢັ້ງຢືນຮົມຢາ (ໃນກໍລະນີ ກຳນົດໂດຍປະເທດປລາຍທາງ)

A true copy of certificate of treatment

☐ ອື່ນໆ ....................................................................................

Other

ຊື່ ແລະ ລາຍເຊັນຜູ້ຮ້ອງຂໍ

Signature of applicant

( )

4 ຄຳເຫັນຂອງເຈົ້າໜ້າທີ່ປ້ອງກັນພືດ For official use only

☐ ອະນຸມັດ ☐ ບໍ່ອະນຸມັດ ເຫດຜົນ ....................................................................

Approved Not approve Reason

ຊື່ ແລະ ລາຍເຊັນຂອງເຈົ້າໜ້າທີ່ປ້ອງກັນພືດ

Signature of authorized officer

( )

ເອກະສານ ຄັດຕິດສຳລັບການສົ່ງອອກຄັ້ງທຳອິດເທົ່ານັ້ນ

Documentary evidence is required only for the first time of exportation.

ໝາຍເຫດ: ໃຫ້ໃສ່ເຄື່ອງໝາຍ ✓ ໃນຊອງ ☐ ໜ້າຂໍ້ຄວາມທີ່ຕ້ອງການ

Note: Insert the check mark symbol ✓ into check block ☐ in front of the required tex